ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 030 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.01.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 013/ສພຊ, ລົງວັນທີ 19 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 22 ມັງກອນ 2015.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 013 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 19 ທັນວາ 2014

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 19 ທັນວາ 2014

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 54 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 ທັນວາ 2014

# ກົດໝາຍ

# ວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຄວບຄຸມການຜະລິດ, ການນໍາເຂົ້າ, ການຈໍາໜ່າຍ, ການໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອສົ່ງເສີມສຸຂະພາບ, ກັນພະຍາດ, ປົກປ້ອງຊີວິດ ແລະ ຊັບສິນ ຂອງພົນລະເມືອງ, ແນໃສ່ຫຼຸດຜ່ອນ ຜົນຮ້າຍທີ່ເກີດຂຶ້ນຈາກການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ, ຄ່າໃຊ້ຈ່າຍທີ່ບໍ່ຈໍາເປັນ ແລະ ຜົນຮ້າຍອື່ນ ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

ເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ເຄື່ອງດື່ມທຸກປະເພດທີ່ມີສ່ວນປະສົມຂອງທາດເຫຼົ້າເອຕາໂນນ (Ethanol) ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ເປັນຕົ້ນ ເຫຼົ້າຂາວ, ເຫຼົ້າບອງຢາ, ເຫຼົ້າວິດສະກີ, ວາຍ, ເບຍ.

ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການນໍາໃຊ້ມາດຕະການຕ່າງໆ ເພື່ອຄຸ້ມຄອງ, ຕິດຕາມ ແລະ ຈໍາກັດ ການຜະລິດ, ການນໍາເຂົ້າ, ການຈໍາໜ່າຍ, ການຊື້-ຂາຍ, ການໂຄສະນາ ແລະ ສະຖານທີ່ບໍລິການ ຫຼື ສະຖານທີ່ອື່ນກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທາດເຫຼົ້າ** ໝາຍເຖິງ ທາດແຫຼວໄວໄຟ, ລະເຫີຍ, ມີກິ່ນ ແຕ່ບໍ່ມີສີ ແລະ ພາໃຫ້ມຶນເມົາ ຫຼື ຊຶມເປື້ອ ຊຶ່ງປະກອບດ້ວຍທາດເຫຼົ້າເອຕາໂນນ ແລະ ເມຕາໂນນທີ່ນຳໃຊ້ເຂົ້າໃນອຸດສາຫະກຳ, ການແພດ ແລະ ເຊື້ອໄຟ;

2. **ທາດເຫຼົ້າເອຕາໂນນ** (Ethanol) ໝາຍເຖິງ ທາດເຫຼົ້າທີ່ສາມາດດື່ມໄດ້;

3. **ທາດເຫຼົ້າເມຕາໂນນ** (Methanol) ໝາຍເຖິງ ທາດເຫຼົ້າທີ່ບໍ່ສາມາດດື່ມໄດ້;

4. **ເຫຼົ້າເຖື່ອນ** ໝາຍເຖິງ ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ເປັນຕົ້ນ ເຄື່ອງດື່ມທີ່ມີທາດເຫຼົ້າທີ່ບໍ່ໄດ້ຂຶ້ນທະບຽນຢ່າງຖືກກົດໝາຍ, ເຫຼົ້າທີ່ລັກລອບນຳເຂົ້າມາຈຳໜ່າຍ;

5. **ເຫຼົ້າປອມ** ໝາຍເຖິງ ເຫຼົ້າທີ່ຖືກສັບປ່ຽນສ່ວນປະກອບບາງຢ່າງອອກ ແລະ ໃຊ້ວັດຖຸອື່ນຜະລິດແທນ ເພື່ອຫຼອກລວງຜູ້ບໍລິໂພກໃຫ້ເຂົ້າໃຈຜິດ ຕໍ່ຄຸນນະພາບ ແລະ ປະລິມານ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າທີ່ນຳໃຊ້ເຄື່ອງໝາຍການຄ້າຂອງເຄື່ອງດື່ມທີ່ມີທາດເຫຼົ້າອື່ນ ທີ່ໄດ້ຂຶ້ນທະບຽນຢ່າງເປັນທາງການແລ້ວ;

6. **ຜູ້ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບການອະນຸຍາດໃຫ້ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

7. **ການອຸປະຖຳ** ໝາຍເຖິງ ການປະກອບສ່ວນຂອງຜູ້ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ໂດຍທາງກົງ ຫຼື ທາງອ້ອມ ທີ່ບໍ່ມີລັກສະນະຈູງໃຈ ຫຼື ສົ່ງເສີມການຂາຍ ແລະ ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ;

8. **ການໂຄສະນາສຸຂະສຶກສາ** ໝາຍເຖິງ ການໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ປຸກລະດົມ ໃຫ້ຄົນຫ່າງໄກຈາກເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງການສະໜອງຂໍ້ມູນຂ່າວສານທີ່ ມີລັກສະນະວິທະຍາສາດ ທີ່ພົວພັນກັບການຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍຮູບການ ແລະ ວິທີການຕ່າງໆ ເປັນຕົ້ນ ຜ່ານສື່ມວນຊົນ;

9. **ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ** ໝາຍເຖິງ ຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າທີ່ໄດ້ຮັບຜົນຮ້າຍທາງດ້ານສຸຂະພາບ, ຄອບຄົວ ແລະ ເສດຖະກິດ-ສັງຄົມ;

10. **ການບົ່ມ** ໝາຍເຖິງ ການປ່ຽນແປງທາງເຄມີ ຂອງທາດແປ້ງໃນອາຫານໃຫ້ກາຍເປັນສານປະກອບອື່ນ ເຊັ່ນ ທາດເຫຼົ້າ, ກົດສົ້ມໂດຍມີສານຈຳພວກເຊື້ອເຫັດ ເປັນຕົວເຮັດໃຫ້ເກີດປະຕິກິລິຍາ;

11. **ການກັ່ນ** ໝາຍເຖິງ ການແຍກສານລະລາຍທີ່ເປັນທາດແຫຼວອອກຈາກສ່ວນປະສົມໂດຍອາໄສຫຼັກການລະເຫີຍເປັນອາຍ ແລະ ລວມຕົວເປັນນ້ຳ;

12. **ຜະລິດຕະພັນແບບອຸດສາຫະກຳ** ໝາຍເຖິງ ຜະລິດຕະພັນທີ່ຜະລິດດ້ວຍເຄື່ອງຈັກ;

13. **ຜະລິດຕະພັນແບບທັດຖະກຳ** ໝາຍເຖິງ ຜະລິດຕະພັນທີ່ຜະລິດດ້ວຍການນຳໃຊ້ເຄື່ອງມືແບບປະຖິມປະຖານ;

14. **ພາຊະນະບັນຈຸ ແລະ ຫຸ້ມຫໍ່** ໝາຍເຖິງ ວັດສະດຸຕ່າງໆທີ່ນຳໃຊ້ໃນການບັນຈຸ ແລະ ຫຸ້ມຫໍ່ເຄື່ອງດື່ມທີ່ມີທາດເຫຼົ້າທຸກຊະນິດ;

15. **ບຸກຄົນທີ່ໃສ່ເຄື່ອງແບບ** ໝາຍເຖິງ ແພດ, ພະຍາບານ, ຄູ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ ແລະ ເຈົ້າໜ້າທີ່ອື່ນຂອງລັດ.

16. **ພະຍາດຊຳເຮື້ອ** ໝາຍເຖິງ ພະຍາດບໍ່ຕິດຕໍ່ ທີ່ມີອາການແກ່ຍາວ ເຊັ່ນ ພະຍາດລະບົບປະສາດ, ຄວາມຈຳເສື່ອມ, ພະຍາດຕັບແຂງ, ພະຍາດມະເຮັງ, ພະຍາດຫົວໃຈເສັ້ນເລືອດ, ພະຍາດຄວາມດັນເລືອດສູງ, ພະບາດເບົາຫວານ ແລະ ພະຍາດອື່ນ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

ລັດ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການອອກມາດຕະການຕ່າງໆ ໃນການກຳນົດສະຖານທີ່ບໍລິການ, ການຜະລິດ, ການປຸງແຕ່ງ,ຈຳໜ່າຍ, ຊື້-ຂາຍ, ຈຳກັດການໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ, ປະກອບບຸກຄະລາກອນ, ພາຫະນະ, ວັດຖູປະກອນ, ສະໜອງງົບປະມານ ທີ່ຈຳເປັນ ແລະ ເພີ່ມອັດຕາພາສີ, ອາກອນ ແລະ ຄ່າທຳນຽມຕາມກົດໝາຍ ແລະ ລະບຽບການ.

ລັດ ເອົາໃຈໃສ່ໂຄສະນາສຶກສາອົບຮົມ ດ້ວຍຫຼາຍຮູບການ ເພື່ອປູກຈິດສຳນຶກທົ່ວສັງຄົມໂດຍສະເພາະແມ່ຍິງຖືພາ, ເດັກນ້ອຍ, ເຍົາວະຊົນ ແລະ ຊາວໜຸ່ມ ໃຫ້ເຫັນໄດ້ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ.

ລັດ ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃຫ້ມີສ່ວນຮ່ວມ, ປະກອບສ່ວນໂດຍທາງກົງ ແລະ ທາງອ້ອມໃນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງການປິ່ນປົວ ແລະ ບຳບັດ ຜູ້ໄດ້ຮັບຜົນຮ້າຍ, ຜູ້ເຈັບເປັນ ຈາກເຄື່ອງດື່ມທີ່ມີທາດເຫຼົ້າ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການຫຼຸດຜ່ອນ, ຈຳກັດ ການສົ່ງເສີມການດື່ມ, ການຂາຍ, ການໂຄສະນາ, ການຜະລິດ, ການນຳເຂົ້າ, ການຈຳໜ່າຍ;
2. ຮັບປະກັນ ການມີສ່ວນຮ່ວມຂອງສັງຄົມ ເຂົ້າໃນການຫຼຸດຜ່ອນ ກ້າວໄປເຖິງການຢຸດເຊົາ ແລະ ແກ້ໄຂຜົນຮ້າຍຂອງການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ;
3. ຮັບປະກັນ ການບຳບັວ, ປິ່ນປົວ ຜູ້ຕິດເຫຼົ້າ ແລະ ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

4. ຮັບປະກັນ ການສຶກສາອົບຮົມ ເພື່ອປູກຈິດສຳນຶກ ແລະ ສ້າງສະຕິໃຫ້ທົ່ວສັງຄົມ ຮູ້ໄດ້ຜົນຮ້າຍ ຈາກການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບທຸລະກິດ ການຜະລິດ, ການນຳເຂົ້າ, ການສົ່ງອອກ, ການຈຳໜ່າຍ, ການຊື້-ຂາຍ, ການໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງສະຖານທີ່ບໍລິການ ແລະ ສະຖານທີ່ອື່ນ ໃນຂອບເຂດທົ່ວປະເທດ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການເຮັດເຫຼົ້າສາໂທ, ເຫຼົ້າໄຫ ແບບຄອບຄົວເນື່ອງໃນໂອກາດງານບຸນປະເພນີເທົ່ານັ້ນ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ, ການຍົກລະດັບພະນັກງານ, ການຄົ້ນຄວ້າວິທະຍາສາດ ລວມທັງການຍາດແຍ່ງທຶນຮອນ, ພາຫະນະ ແລະ ອຸປະກອນ ເພື່ອເຮັດໃຫ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ມີປະສິດທິຜົນສູງ ແລະ ປະຕິບັດ ຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດ ແລະ ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 8 ປະເພດເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ສອງປະເພດ ຄື:

1. ເຄື່ອງດື່ມທີ່ມີທາດເຫຼົ້າ ປະເພດບົ່ມ ເຊັ່ນ ວາຍ, ເບຍ, ເຫຼົ້າສາໂທ, ເຫຼົ້າໄຫ ແລະ ອື່ນໆ;
2. ເຄື່ອງດື່ມທີ່ມີທາດເຫຼົ້າ ປະເພດກັ່ນ ເຊັ່ນ ເຫຼົ້າຂາວ, ວິດສະກີ ແລະ ອື່ນໆ.

**ມາດຕາ 9 ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າມີຜົນຮ້າຍ ດັ່ງນີ້:

1. ຜົນຮ້າຍຕໍ່ສຸຂະພາບ;
2. ຜົນຮ້າຍຕໍ່ຄອບຄົວ;
3. ຜົນຮ້າຍຕໍ່ເສດຖະກິດ-ສັງຄົມ.

**ມາດຕາ 10 ຜົນຮ້າຍຕໍ່ສຸຂະພາບ**

ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ມີຜົນຮ້າຍ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບທັງຮ່າງກາຍ ແລະ ຈິດໃຈ, ເປັນສາເຫດ ທີ່ພາໃຫ້ເກີດອຸປະຕິເຫດ, ພະຍາດຊໍາເຮື້ອ ແລະ ພະຍາດອື່ນທີ່ນໍາໄປສູ່ຄວາມພິການ ແລະ ການເສຍຊີວິດ.

ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າໃນໄລຍະຖືພາ ເປັນສາເຫດ ແລະ ປັດໄຈສ່ຽງ ທີ່ພາໃຫ້ຫຼູລູກ, ເດັກເກີດກ່ອນກໍານົດ, ມີນໍ້າໜັກຕໍ່າ, ຜິດປົກກະຕິ, ພິການ, ມີການພັດທະນາທາງສະໝອງ ແລະ ຮ່າງກາຍຊ້າ.

**ມາດຕາ 11 ຜົນຮ້າຍຕໍ່ຄອບຄົວ**

ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ພາໃຫ້ມີຜົນຮ້າຍຕໍ່ໝົດທຸກຄົນໃນຄອບຄົວ ໂດຍສະເພາະການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ເດັກ ແລະ ຜູ້ອາຍຸສູງ, ຂາດຄວາມເປັນແບບຢ່າງ ແລະ ຄວາມຮັບຜິດຊອບ ຕໍ່ຄອບຄົວທັງຍັງເປັນການເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈໍາເປັນຂອງຄອບຄົວ.

**ມາດຕາ 12 ຜົນຮ້າຍຕໍ່ເສດຖະກິດ-ສັງຄົມ**

ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ພາໃຫ້ເກີດອຸປະຕິເຫດ, ເກີດອາຊະຍາກໍາ ແລະ ອື່ນໆຊຶ່ງແຕະຕ້ອງເຖິງການພັດທະນາຊັບພະຍາກອນມະນຸດ, ຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ພາໃຫ້ສູນເສຍລາຍຮັບທັງເປັນການໃຊ້ຈ່າຍຟູມເຟືອຍ ແລະ ເປັນຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ.

## ພາກທີ III
## ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ
### ໝວດທີ 1
### ການຄວບຄຸມການດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 13 ການດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ**

ທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການດໍາເນີນກິດຈະການໃດໜຶ່ງ ກ່ຽວກັບການຜະລິດ, ການປຸງແຕ່ງ, ການບັນຈຸ, ການຫຸ້ມຫໍ່, ການຕິດສະຫຼາກ, ການຈໍາໜ່າຍ, ການບໍລິການ, ການສະໜອງ, ການເກັບຮັກສາ, ການຂົນສົ່ງ, ການສົ່ງອອກ, ການນໍາເຂົ້າ, ການສົ່ງຜ່ານ, ການກວດກາຄຸນນະພາບເຄື່ອງດື່ມທີ່ມີທາດເຫຼົ້າ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ ໂດຍໄດ້ຮັບການເຫັນດີທາງດ້ານວິຊາການ ຈາກຂະແໜງການສາທາລະນະສຸກ.

**ມາດຕາ 14 ການຜະລິດ**

ການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ມີ ສອງ ປະເພດ ຄື ແບບອຸດສາຫະກຳ ແລະ ແບບຫັດຖະກຳ.

ການຜະລິດ ແບບອຸດສະຫະກຳ ແລະ ແບບຫັດຖະກຳ ໃຫ້ປະຕິບັດຕາມມາດຕະຖານການຄວບຄຸມຄວາມປອດໄພ, ມາດຕະຖານການຜະລິດ, ສະຫຼາກ ແລະ ຄຳເຕືອນ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 15 ການປຸງແຕ່ງ**

ການປຸງແຕ່ງ ແມ່ນ ການນຳເອົາວັດຖຸດິບຕ່າງໆມາປະກອບ ຫຼື ປະສົມເຂົ້າເປັນເຄື່ອງດື່ມທີ່ມີທາດເຫຼົ້າ ຊຶ່ງຕ້ອງຮັບປະກັນຄວາມປອດໄພ, ອະນາໄມ, ມີຄຸນນະພາບ; ສະຖານທີ່, ພາຊະນະ ແລະ ອຸປະກອນອື່ນ ທີ່ຮັບໃຊ້ການປຸງແຕ່ງ ຕ້ອງຮັບປະກັນຄວາມສະອາດ ແລະ ໄດ້ມາດຕະຖານ.

ຜູ້ປຸງແຕ່ງເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງບໍ່ແມ່ນຜູ້ເປັນພະຍາດຕິດຕໍ່, ມີການອະນາໄມສ່ວນບຸກຄົນ, ໃສ່ຊຸດທີ່ສະອາດ ແລະ ຕ້ອງກວດສຸຂະພາບຢ່າງໜ້ອຍສອງຄັ້ງຕໍ່ປີ.

**ມາດຕາ 16 ການບັນຈຸ**

ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງບັນຈຸໃສ່ພາຊະນະ ເຊັ່ນ ຂວດແກ້ວ, ໄຫ, ກະປ໋ອງ ທີ່ສະອາດ ແລະ ປອດໄພ.

**ມາດຕາ 17 ການຫຸ້ມຫໍ່**

ພາຊະນະທີ່ບັນຈຸເຄື່ອງດື່ມທີ່ມີທາດເຫຼົ້າທີ່ນຳເຂົ້າຈາກຕ່າງປະເທດ ຫຼື ຜະລິດຢູ່ພາຍໃນປະເທດ ຕ້ອງມີການຫຸ້ມຫໍ່ທີ່ປອດໄພ. ກ່ອນຈະນຳອອກຈຳໜ່າຍ ຕ້ອງໄດ້ຜ່ານການກວດກາ ຈາກຂະແໜງການສາທາລະນະສຸກ.

**ມາດຕາ 18 ການຕິດສະຫຼາກ**

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຈໍລະຈອນ, ຈຳໜ່າຍ, ຂາຍ, ບໍລິການໃນ ສປປ ລາວ, ນຳເຂົ້າ ແລະ ສົ່ງອອກ ລວມທັງສິ່ງຫຸ້ມຫໍ່ເຄື່ອງດື່ມດັ່ງກ່າວ ຕ້ອງຕິດສະຫຼາກ ແລະ ຄຳເຕືອນສຸຂະພາບ ເປັນພາສາລາວ ແລະ ພາສາຕ່າງປະເທດທີ່ບົ່ງບອກຂໍ້ມູນຢ່າງຖືກຕ້ອງ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 19 ການຈຳໜ່າຍ**

ການຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ພາຍໃນປະເທດ ປະກອບດ້ວຍ ການຂາຍຍົກ ແລະ ການຂາຍຍ່ອຍ ຊຶ່ງຕ້ອງຢູ່ພາຍໃຕ້ການຄວບຄຸມ, ການຕິດຕາມ, ການກວດກາ ແລະ ການປະຕິບັດ ຕາມລະບຽບການ ຂອງຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

ສຳລັບເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ສົ່ງອອກຈຳໜ່າຍໄປຕ່າງປະເທດ ນອກຈາກປະຕິບັດ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລ້ວ ຍັງຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງປະເທດທີ່ນຳເຂົ້າອີກດ້ວຍ.

**ມາດຕາ 20 ການບໍລິການ**

ການບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງດຳເນີນການສະເພາະໃນສະຖານທີ່ ແລະ ເວລາ ຕາມທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ການສະໜອງ**

ການສະໜອງ ເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ສະຖານທີ່ຈຳໜ່າຍທີ່ມີໃບອະນຸຍາດຖືກຕ້ອງ ຕ້ອງຮັບປະກັນຄວາມປອດໄພ, ອະນາໄມ ແລະ ຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 22 ການເກັບຮັກສາ**

ເພື່ອ ບໍ່ໃຫ້ເຄື່ອງດື່ມທີ່ມີທາດເຫຼົ້າເສື່ອມຄຸນນະພາບ, ບູດ, ໃຫ້ຢູ່ໃນສະພາບທີ່ບໍລິໂພກໄດ້ ແລະ ຮັບປະກັນຄວາມປອດໄພ ຕ້ອງເກັບຮັກສາຕາມເງື່ອນໄຂສະເພາະຂອງເຄື່ອງດື່ມແຕ່ລະຊະນິດ ແລະ ປະຕິບັດ ຕາມຫຼັກການ ການເກັບຮັກສາທີ່ດີ.

**ມາດຕາ 23 ການຂົນສົ່ງ**

ການຂົນສົ່ງເຄື່ອງດື່ມທີ່ມີທາດເຫຼົ້າທຸກຊະນິດ ຕ້ອງປະຕິບັດຕາມຫຼັກການຂົນສົ່ງທີ່ດີ ແຕ່ຕົ້ນທາງຈົນເຖິງປາຍທາງ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງເຄື່ອງດື່ມ ຕາມເງື່ອນໄຂສະເພາະຂອງເຄື່ອງດື່ມແຕ່ລະຊະນິດ.

**ມາດຕາ 24 ການສົ່ງອອກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສົ່ງອອກເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ແລະ ປະຕິບັດຕາມການກຳນົດຂອງປະເທດນຳເຂົ້າ.

**ມາດຕາ 25 ການນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ເປັນຕົ້ນ ໃບຢັ້ງຢືນການວິໄຈຈາກຫ້ອງວິໄຈຂອງປະເທດຕົ້ນກຳເນີດ, ໃບຢັ້ງຢືນຄຸນນະພາບ, ໃບຢັ້ງຢືນຄວາມປອດໄພອາຫານ, ຮູບແບບສະຫຼາກ ແລະ ຄຳເຕືອນສຸຂະພາບກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດຈາກຂະແໜງການສາທາລະນະສຸກ.

ການນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຢູ່ພາຍໃຕ້ການຄວບຄຸມ, ການຕິດຕາມ, ການກວດກາ ແລະ ການປະຕິບັດຕາມການກຳນົດຂອງກະຊວງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ນຳເຂົ້າມາຈຳໜ່າຍຢູ່ ສປປ ລາວ ຕ້ອງມີການຕິດສະແຕມ, ເສັຍພາສີ, ອາກອນ ແລະ ຄ່າທຳນຽມ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 26 ການສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂົນສົ່ງເຄື່ອງດື່ມທີ່ມີທາດເຫຼົ້າ ຈາກປະເທດໜຶ່ງຜ່ານ ສປປ ລາວ ໄປຫາປະເທດທີສາມ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ. ໃນການສົ່ງຜ່ານນັ້ນ ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປິດ ແລະ ປະທັບຕາໃສ່ຕູ້ບັນຈຸສິນຄ້າ ແລະ ຕ້ອງປະຕິບັດຕາມລະບຽບການ ການສົ່ງຜ່ານແດນ. ໃນກໍລະນີທີ່ມີການຄ່ຽນຖ່າຍສິນຄ້າໃສ່ພາຫະນະບັນທຸກອື່ນ ຫຼື ລົງສາງ ກ່ອນການສົ່ງຜ່ານນັ້ນ ຕ້ອງມີການກວດກາຢັ້ງຢືນຈາກຂະແໜງການສາທາລະນະສຸກ ແລະ ດ່ານພາສີຊາຍແດນ ກ່ຽວກັບຈຳນວນ ແລະ ຊະນິດສິນຄ້າທີ່ໄດ້ແຈ້ງໄວ້ ພ້ອມທັງເອກະສານຕິດຕາມສິນຄ້າ ແລະ ແຈ້ງໄປຍັງດ່ານຂາອອກ ບ່ອນສິນຄ້າດັ່ງກ່າວຜ່ານອອກໄປ.

**ມາດຕາ 27 ການກວດກາຄຸນນະພາບ**

ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າກ່ອນນຳເຂົ້າ, ຈຳໜ່າຍ ຕ້ອງໄດ້ຜ່ານການກວດກາຄຸນນະພາບ ຕາມລະບຽບການຂອງກະຊວງສາທາລະນະສຸກ.

**ມາດຕາ 28 ສະຖານທີ່ດຳເນີນທຸລະກິດ**

ສະຖານທີ່ດຳເນີນທຸລະກິດ ເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ສິ່ງປຸກສ້າງ ຫຼື ໂຄງສ້າງອື່ນແບບຖາວອນ, ຊົ່ວຄາວ ລວມທັງພາຫະນະ, ທີ່ດິນບ່ອນສິ່ງດັ່ງກ່າວຕັ້ງຢູ່ ແລະ ສະຖານທີ່ອ້ອມຮອບ ສຳລັບການຜະລິດ, ການປຸງແຕ່ງ, ການຂາຍ, ການບໍລິການ, ການຫຸ້ມຫໍ່ ແລະ ການເກັບຮັກສາເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 29 ທີ່ຕັ້ງສະຖານທີ່ບໍລິການ**

ທີ່ຕັ້ງສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງໃຫ້ຫ່າງຈາກສະຖານທີ່ ດັ່ງນີ້:

1. ສະຖານທີ່ບໍລິການສຸຂະພາບ;
2. ສະຖານການສຶກສາ;
3. ສຳນັກງານ, ອົງການຂອງລັດ;
4. ສາສະໜາສະຖານ;
5. ສະຖານເອກອັກຄະລັດຖະທູດ;
6. ສວນສາທາລະນະ;
7. ໂຮງມະໂຫລະສົບ;
8. ສະຖານີລົດໂດຍສານ;
9. ປ້ຳນ້ຳມັນເຊື້ອໄຟ;
10. ສະໜາມກິລາ;
11. ໂຮງຈັກໂຮງງານ.

ການກຳນົດໄລຍະຫ່າງຈາກສະຖານທີ່ດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 ການຊື້-ຂາຍຍ່ອຍ**

ການຊື້-ຂາຍຍ່ອຍ ແມ່ນ ການຊື້-ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ຜູ້ບໍລິໂພກ ເພື່ອຊົມໃຊ້ເອງ ແຕ່ຫາກບໍ່ແມ່ນ ເພື່ອນຳໄປຂາຍຕໍ່.

ເຄື່ອງດື່ມທີ່ມີທາດເຫຼົ້າ ອະນຸຍາດໃຫ້ຈຳໜ່າຍ, ຊື້-ຂາຍຍ່ອຍໄດ້ ສະເພາະແຕ່ເວລາ 16:00 ໂມງ ຫາ 23:00 ໂມງ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ການໂຄສະນາ**

ການໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າບໍ່ວ່າຢູ່ໃນສະຖານທີ່ໃດ, ຜ່ານສື່ມວນຊົນທຸກປະເພດ ແລະ ກິດຈະກຳທາງການຕະຫຼາດທຸກຮູບແບບ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ເນື້ອໃນການໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ຕ້ອງເປັນການໃຫ້ຄວາມຮູ້, ແນວຄິດສ້າງສັນຕໍ່ສັງຄົມ;
2. ຕ້ອງມີຄຳເຕືອນດ້ານສຸຂະພາບ;
3. ບໍ່ມີລັກສະນະສົ່ງເສີມກິດຈະກຳທາງການຕະຫຼາດ ຫຼື ການຂາຍ;
4. ບໍ່ມີລັກສະນະຊວນເຊື່ອ ໃຫ້ມີການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ;
5. ບໍ່ສະແດງເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການບໍລິໂພກເຄື່ອງດື່ມດັ່ງກ່າວ;

6. ບໍ່ສະແດງເຄື່ອງໝາຍການຄ້າ;

7. ບໍ່ໃຫ້ເປັນການສ້າງຄ່ານິຍົມ ກ່ຽວກັບການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ແກ່ສັງຄົມ.

ການກຳນົດເວລາ ແລະ ຄ່າບໍລິການໂຄສະນາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 ການອຸປະຖຳ**

ການອຸປະຖຳບໍ່ວ່າທາງກົງ ຫຼື ທາງອ້ອມ ຕ້ອງບໍ່ຢູ່ໃນຮູບການໂຄສະນາສົ່ງເສີມການຂາຍ ແລະ ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ.

## ໝວດທີ 2
## ການຄວບຄຸມຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 33 ມາດຕະການຄວບຄຸມຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ**

ມາດຕະການຄວບຄຸມຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ມາດຕະການທາງດ້ານສຸຂານາໄມ ຊຶ່ງແມ່ນມາດຕະການຕ່າງໆ ທີ່ນຳໃຊ້ເພື່ອປົກປ້ອງ ສຸຂະພາບ ແລະ ຊີວິດຂອງຄົນຈາກຄວາມສ່ຽງຕ່າງໆທີ່ມາຈາກການປົນເປື້ອນໃນເຄື່ອງດື່ມ ທີ່ມີທາດເຫຼົ້າ;

2. ມາດຕະການທາງດ້ານເຕັກນິກ ຊຶ່ງແມ່ນຂັ້ນຕອນຕ່າງໆ ກ່ຽວກັບມາດຕະຖານການຜະລິດ, ວິທີການຜະລິດ, ການທົດສອບ ແລະ ການກວດກາ ຈາກຂະແໜງການສາທາລະນະສຸກ.

**ມາດຕາ 34 ການຮັບປະກັນຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ໄດ້ຜະລິດ, ປຸງແຕ່ງ, ຈຳໜ່າຍ, ສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ.

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຮັບປະກັນຄຸນນະພາບນັ້ນ ຕ້ອງປະຕິບັດຕາມຫຼັກການ ການຜະລິດທີ່ດີ, ການສຸຂານາໄມທີ່ດີ, ການວິເຄາະຄວາມສ່ຽງ ແລະ ການຄວບຄຸມຈຸດອັນຕະລາຍ ແລະ ຫຼັກການອື່ນ ທີ່ກ່ຽວຂ້ອງຢ່າງຖືກຕ້ອງ.

ຄຸນນະພາບ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງໄດ້ຮັບການກວດກາຈາກຂະແໜງການສາທາລະນະສຸກ.

## ໝວດທີ 3
## ພັນທະຂອງຜູ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ເຄື່ອງດື່ມທີ່ມີທາດເຫຼົ້າ

### ມາດຕາ 35 ພັນທະທົ່ວໄປ

ຜູ້ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະທົ່ວໄປ ດັ່ງນີ້:

1. ຮັບປະກັນມາດຕະຖານຄວບຄຸມຄວາມປອດໄພຂອງເຄື່ອງດື່ມທີ່ມີທາດເຫຼົ້າ;
2. ສົ່ງເສີມສຸຂະພາບ, ປົກປ້ອງຊີວິດ, ສິດ ແລະ ຜົນປະໂຫຍດຂອງຜູ້ບໍລິໂພກ;
3. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າຢ່າງຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບຜູ້ຜະລິດ ເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ພາຍໃນປະເທດ ແລະ ຜູ້ນຳເຂົ້າຈາກຕ່າງປະເທດ ຕ້ອງໄດ້ປະຕິບັດພັນທະເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 36 ພັນທະຂອງຜູ້ຜະລິດ

ຜູ້ຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຕິດສະຫຼາກ, ຄຳເຕືອນ ທີ່ເປັນຂໍ້ຄວາມໃສ່ພາຊະນະບັນຈຸ, ສິ່ງຫຸ້ມຫໍ່ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມລະບຽບການ;
2. ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ ແລະ ອ້ອມຂ້າງການຜະລິດຂອງຕົນ;
3. ສົ່ງເສີມສຸຂະພາບ ແລະ ກັນພະຍາດ ຂອງຜູ້ອອກແຮງງານ ໃນການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມລະບຽບການ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 37 ພັນທະຂອງຜູ້ນຳເຂົ້າ

ຜູ້ນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຮັບປະກັນຄຸນນະພາບ ແລະ ມາດຕະຖານ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຕາມມາດຕະຖານ ຄວບຄຸມຄວາມປອດໄພ ຂອງ ສປປ ລາວ;
2. ຮັບປະກັນການນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ມີການຕິດສະຫຼາກ, ຄຳເຕືອນທີ່ເປັນຂໍ້ຄວາມໃສ່ພາຊະນະ ແລະ ສິ່ງຫຸ້ມຫໍ່ຕາມລະບຽບການ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ພັນທະຂອງຜູ້ຈຳໜ່າຍ**

ຜູ້ຈຳໜ່າຍ, ຊື້-ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຮັບປະກັນໃຫ້ມີສະຖານທີ່ ທີ່ເໝາະສົມ ໃນການຈຳໜ່າຍ, ຊື້-ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ;
2. ແນະນຳ, ອະທິບາຍ ໃຫ້ຜູ້ຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ ຮູ້ເຖິງຜົນຮ້າຍຂອງການບໍລິໂພກ;
3. ຈຳໜ່າຍ, ຊື້-ຂາຍ ເຄື່ອງດື່ມທີ່ມີທາດເຫຼົ້າທີ່ມີການຕິດສະຫຼາກ ແລະ ຄຳເຕືອນຢ່າງຖືກຕ້ອງ ຕາມລະບຽບການ;
4. ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ຈຳໜ່າຍຂອງຕົນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຄວາມຮັບຜິດຊອບກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 39 ຄວາມຮັບຜິດຊອບຂອງລັດ**

ຂະແໜງການຂອງລັດ ມີຄວາມຮັບຜິດຊອບໃນການຊີ້ນຳ, ການຄຸ້ມຄອງ, ການຕິດຕາມ, ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ໃຫ້ການບຳບັດຜູ້ຕິດເຫຼົ້າຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 40 ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ມີຄວາມຮັບຜິດຊອບ ເຂົ້າຮ່ວມໃນຂະບວນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃນການໂຄສະນາ ເຜີຍແຜ່, ປຸກລະດົມໃຫ້ຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 41 ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີບົດບາດສຳຄັນ ແລະ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ປູກຈິດສຳນຶກ, ໃຫ້ຄຳແນະນຳແກ່ສະມາຊິກຄອບຄົວ ຮູ້ເຖິງຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ, ເຂົ້າຮ່ວມຂະບວນການຄວບຄຸມ, ການຄຸ້ມຄອງ, ການຕິດຕາມ, ການກວດກາ ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຊ່ວຍໃນການບຳບັດ, ປິ່ນປົວ ເມື່ອສະມາຊິກຄອບຄົວຕິດເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 42 ຄວາມຮັບຜິດຊອບຂອງບຸກຄົນ**

ພົນລະເມືອງທຸກຄົນ ເປັນຕົ້ນ ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ, ກຳມະກອນ ຕ້ອງເປັນເຈົ້າຕົນເອງ ໃນການຫ່າງໄກຈາກເຄື່ອງດື່ມທີ່ມີທາດເຫຼົ້າ, ຕ້ານແນວຄິດ, ຄ່ານິຍົມ ແລະ ພຶດຕິກຳ ໃນການຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ.

ພໍ່ແມ່, ຜູ້ປົກຄອງ, ຄູ, ອາຈານ ຕ້ອງເປັນແບບຢ່າງ ໃນການຫ່າງໄກຈາກເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ໃຫ້ຄຳແນະນຳແກ່ລູກຫຼານ, ນັກຮຽນ, ນັກສຶກສາຂອງຕົນ. ຜູ້ເປັນລູກ, ຫຼານ, ນັກຮຽນ, ນັກສຶກສາ ກໍຕ້ອງຟັງຄຳແນະນຳດັ່ງກ່າວ.

## ພາກທີ IV
## ການສົ່ງເສີມສຸຂະພາບຈາກຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ
### ໝວດທີ 1
### ການໂຄສະນາສຸຂະສຶກສາ
### ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 43 ການໂຄສະນາສຸຂະສຶກສາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໂຄສະນາສຸຂະສຶກສາ ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ພົນລະເມືອງ ໂດຍສະເພາະເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ, ກຳມະກອນ ເພື່ອປູກຈິດສຳນຶກ ຕ້ານແນວຄິດ, ຄ່ານິຍົມ ແລະ ພຶດຕິກຳໃນການຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 44 ການສະໜອງຂໍ້ມູນຂ່າວສານ**

ຂະແໜງການສາທາລະນະສຸກ, ຂະແໜງການອື່ນຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນໃນສັງຄົມ ທັງພາກລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບ ແລະ ປະກອບສ່ວນເຂົ້າໃນການສະໜອງຂໍ້ມູນຂ່າວສານ ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ພົນລະເມືອງ ຢ່າງເປັນປົກກະຕິ.

ພົນລະເມືອງທຸກຄົນ ມີສິດໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ຜົນຮ້າຍຂອງການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ.

## ໝວດທີ 2
## ສະຫຼາກ ແລະ ຄຳເຕືອນ ໃສ່ພາຊະນະບັນຈຸຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 45 ສະຫຼາກ**

ສະຫຼາກ ແມ່ນ ເຄື່ອງໝາຍ, ຮູບພາບ ຫຼື ຂໍ້ຄວາມທີ່ພິມຕິດໃສ່ພາຊະນະບັນຈຸແຕ່ລະແກ້ວ, ທໍ່, ກະປ໋ອງ ແລະ ຫີບ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອສະແດງໃຫ້ຜູ້ບໍລິໂພກຮັບຮູ້ ຄຳເຕືອນກ່ຽວກັບສຸຂະພາບ, ຂໍ້ມູນດ້ານໂພຊະນາການ, ສ່ວນປະກອບຫຼັກ, ການນຳໃຊ້, ການເກັບຮັກສາ, ຜູ້ຜະລິດ ຫຼື ຜູ້ຈຳໜ່າຍ, ປະລິມານທາດເຫຼົ້າເອຕາໂນນ ແລະ ທາດອື່ນ ໃນເຄື່ອງດື່ມທີ່ມີທາດເຫຼົ້າ.

ກະຊວງສາທາລະນະສຸກ ເປັນຜູ້ກຳນົດຂໍ້ຄວາມຕ່າງໆ ຂອງສະຫຼາກ.

**ມາດຕາ 46 ຄຳເຕືອນ**

ຄຳເຕືອນ ແມ່ນ ຂໍ້ຄວາມທີ່ພິມຕິດໃສ່ພາຊະນະບັນຈຸ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຊຶ່ງກຳນົດໂດຍ ກະຊວງສາທາລະນະສຸກ ເພື່ອສະແດງໃຫ້ຜູ້ບໍລິໂພກຮັບຮູ້ວ່າ ເຄື່ອງດື່ມນີ້ເປັນອັນຕະລາຍ ແລະ ມີຜົນຮ້າຍຕໍ່ສຸຂະພາບ.

## ໝວດທີ 3
## ການດັດສົມລາຄາເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 47 ການດັດສົມ ແລະ ຕິດລາຄາ**

ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງມີການດັດສົມລາຄາ ຢ່າງສອດຄ່ອງກັບນະໂຍບາຍພາສີ, ອາກອນໃນແຕ່ລະໄລຍະ ເພື່ອຫຼຸດຜ່ອນການຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າຢູ່ໃນສັງຄົມ.

ຂະແໜງການທີ່ກ່ຽວຂ້ອງຂອງລັດ ຕ້ອງຕິດຕາມ, ກວດກາ, ເກັບກຳຂໍ້ມູນ ກ່ຽວກັບລາຄາເຄື່ອງດື່ມທີ່ມີທາດເຫຼົ້າ ໃນແຕ່ລະໄລຍະ.

ຜູ້ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຕິດລາຄາເປັນເງິນກີບຢ່າງເປີດເຜີຍ.

**ມາດຕາ 48 ການເກັບພາສີ, ອາກອນ**

ການເກັບພາສີ, ອາກອນ ກ່ຽວກັບການດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ໃນ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ.

# ພາກທີ V
# ການແກ້ໄຂຜົນກະທົບຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 49 ການປຸກລະດົມ, ໂຄສະນາຊວນເຊື່ອໃຫ້ຫຼຸດຜ່ອນການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ປຸກລະດົມ, ໂຄສະນາຊວນເຊື່ອ, ແນະນຳວິທີໃຫ້ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຕໍ່ສຸຂະພາບ, ຄອບຄົວ, ເສດຖະກິດ-ສັງຄົມ ເພື່ອໃຫ້ມີຄວາມຕື່ນຕົວ, ຫຼຸດຜ່ອນ ແລະ ກ້າວໄປເຖິງການຢຸດເຊົາ.

**ມາດຕາ 50 ການບຳບັດ, ປິ່ນປົວ**

ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງສະໝັກໃຈຕື່ນຕົວ ເຂົ້າຮັບການບຳບັດ ແລະ ປິ່ນປົວ ດ້ວຍການເອົາໃຈໃສ່ ແລະ ຊ່ວຍເຫຼືອຈາກຄອບຄົວ, ຊຸມຊົນ, ສັງຄົມ ແລະ ໂຮງໝໍ.

**ມາດຕາ 51 ການຊ່ວຍເຫຼືອຜູ້ຕ້ອງການຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ**

ການຊ່ວຍເຫຼືອຜູ້ຕ້ອງການຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງດຳເນີນໂດຍໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອ ດ້ວຍວິທີການ ດັ່ງນີ້:

1. ໃຫ້ຄຳປຶກສາ, ແນະນຳ ກ່ຽວກັບການຫຼຸດຜ່ອນ ແລະ ຢຸດເຊົາການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການສົ່ງເສີມສຸຂະພາບ;
2. ໃຫ້ການບຳບັດ ແລະ ປິ່ນປົວ ດ້ວຍຮູບການຕ່າງໆ ຕາມເງື່ອນໄຂຕົວຈິງ;
3. ຈັດກິດຈະກຳຕ່າງໆ ເພື່ອໃຫ້ຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 52 ໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອ**

ໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ຮັບການສ້າງຕັ້ງຂຶ້ນໂດຍຂະແໜງການສາທາລະນະສຸກ ຊຶ່ງມີພາລະບົດບາດໂຄສະນາສຸຂະສຶກສາ, ໃຫ້ຄຳແນະນຳ, ຄຳປຶກສາ ແລະ ການຊ່ວຍເຫຼືອຜູ້ຕ້ອງການຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ.

ໜ່ວຍງານດັ່ງກ່າວ ຕ້ອງເກັບກຳຂໍ້ມູນສະຖິຕິ, ຕິດຕາມ, ກວດກາ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ.

ນອກຈາກໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອແລ້ວ ອົງການຈັດຕັ້ງສັງຄົມ, ຊຸມຊົນ, ຄອບຄົວ ແລະ ໝູ່ເພື່ອນ ກໍຕ້ອງມີສ່ວນຮ່ວມໃນການຊ່ວຍເຫຼືອຜູ້ຕ້ອງການຢຸດເຊົາບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການແນະນຳ ແລະ ການສ້າງກິດຈະກຳຕ່າງໆ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 53 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ**

ຫ້າມຜູ້ດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພຶດຕິກໍາ ດັ່ງນີ້:

1. ສະແດງເຄື່ອງໝາຍທີ່ເປັນສັນຍາລັກ, ເຄື່ອງໝາຍການຄ້າຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານສື່ມວນຊົນທຸກປະເພດ, ສະຖານທີ່ສາທາລະນະ, ຊຸມຊົນ, ສະໜາມກິລາ, ສະໜາມເດັກນ້ອຍ, ສະຖານການສຶກສາ, ງານມະໂຫລະສົບຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

2. ໂຄສະນາໃນທຸກຮູບແບບ ທີ່ເປັນການຊຸກຍູ້, ສົ່ງເສີມການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ, ການຈໍາໜ່າຍ ແລະ ການຊື້-ຂາຍ ໃນສະຖານທີ່ ທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້;

3. ອຸປະຖໍາດ້ວຍຮູບການຕ່າງໆ ທີ່ເປັນການສົ່ງເສີມການບໍລິໂພກ ແລະ ການຂາຍ ບໍ່ວ່າທາງກົງ ຫຼື ທາງອ້ອມ;

4. ຜະລິດ, ນໍາເຂົ້າ, ຊື້-ຂາຍ ເຫຼົ້າເຖື່ອນ, ເຫຼົ້າປອມ, ເຫຼົ້າໝົດອາຍຸ, ເຫຼົ້າບໍ່ມີສະຫຼາກ, ບໍ່ມີຄໍາເຕືອນເປັນພາສາລາວ, ບໍ່ຕິດລາຄາ ແລະ ບໍ່ຕິດສະແຕັມ ຕາມກົດໝາຍ ແລະ ລະບຽບການ;

5. ຂາຍເຄື່ອງດື່ມທີ່ມີທາດເຫຼົ້າດ້ວຍເຄື່ອງຈັກອັດຕະໂນມັດທຸກຊະນິດ;

6. ສົ່ງເສີມການຂາຍໃນທຸກຮູບແບບ ເຊັ່ນ ການຈົກສະຫຼາກ, ຫຼຸດລາຄາ, ແລກປ່ຽນ, ແຈກ, ແຖມ, ເຄື່ອງທີ່ລະນຶກ ແລະ ອື່ນໆ;

7. ຫຼຸດລາຄາຕໍ່າກວ່າຕົ້ນທຶນການຜະລິດ ຫຼື ຕົ້ນທຶນການນໍາເຂົ້າ ບວກກັບພາສີ, ອາກອນ ແລະ ຄ່າທໍານຽມຕ່າງໆ ທີ່ລັດຮັບຮູ້;

8. ຂັດຂວາງການປະຕິບັດໜ້າທີ່, ນາບຂູ່ ຫຼື ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

9. ນໍາໃຊ້ສານເຄມີທີ່ບໍ່ອະນຸຍາດ ຫຼື ສິ່ງປົນເປື້ອນອື່ນທີ່ເປັນອັນຕະລາຍ ໃສ່ເຄື່ອງດື່ມທີ່ມີທາດເຫຼົ້າ;

10. ຈໍາໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າໃນວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;

11. ຈໍາໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ຜູ້ມີອາຍຸຕໍ່າກວ່າ ສິບແປດປີ, ຜູ້ມຶນເມົາ, ບຸກຄົນ ໃສ່ເຄື່ອງແບບ ແລະ ຜູ້ຂັບຂີ່;

12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 54 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທວງເອົາ, ຂໍເອົາ, ໃຫ້ ຫຼື ຮັບສິນບົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂໍ້ມູນຂອງຜູ້ດຳເນີນທຸລະກິດ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າທີ່ໄດ້ຮັບມອບໝາຍ;

3. ປົກປ້ອງ, ຊຸກເຊື່ອງ ຫຼື ປິດບັງ, ຮ່ວມກັນກະທຳຜິດ ກັບຜູ້ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 55 ຂໍ້ຫ້າມສຳລັບຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ**

ຫ້າມຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພຶດຕິກຳ ດັ່ງນີ້:

1. ຂັບຂີ່ຍານພາຫະນະ;

2. ໃຊ້ຄວາມຮຸນແຮງຕໍ່ຜູ້ອື່ນ ໂດຍສະເພາະແມ່ຍິງ, ເດັກນ້ອຍ ແລະ ຜູ້ອາຍຸສູງ;

3. ອາລະວາດຕີກັນ;

4. ລົບກວນເວລາເຮັດວຽກ, ເວລາພັກຜ່ອນ, ສ້າງຄວາມລຳຄານແກ່ບຸກຄົນອື່ນ ຫຼື ສ້າງຄວາມຫຍຸ້ງຍາກໃຫ້ສັງຄົມ;

5. ປະຕິເສດການກວດຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບປະລິມານທາດເຫຼົ້າຢູ່ໃນເລືອດ, ໃນປັດສະວະ ຫຼື ລົມຫາຍໃຈ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 56 ຂໍ້ຫ້າມ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສະໜັບສະໜູນ ການໂຄສະນາ, ສົ່ງເສີມເຄື່ອງດື່ມທີ່ມີທາດເຫຼົ້າ;

3. ຊັກຊວນ, ນຳໃຊ້ ຫຼື ໃຫ້ຜູ້ມີອາຍຸຕໍ່າກວ່າ ສິບແປດປີ ດື່ມ, ຊື້-ຂາຍ, ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ;

4. ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 57 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 58 ການປະນີປະນອມ

ໃນກໍລະນີເກີດຂໍ້ຂັດແຍ່ງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້ານັ້ນ ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ ແລະ ປະນີປະນອມກັນ.

### ມາດຕາ 59 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້ານັ້ນ ຄູ່ກໍລະນີ ມີສິດ ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ບ່ອນຕົນໄດ້ຮັບອະນຸຍາດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 60 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້ານັ້ນ ຄູ່ກໍລະນີ ມີສິດ ສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 61 ການຕັດສິນຂອງສານ

ໃນກໍລະນີ ເກີດຂໍ້ຂັດແຍ່ງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້ານັ້ນ ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມກົດໝາຍ.

**ມາດຕາ 62 ການແກ້ໄຂທີ່ມີລັກສະນະສາກົນ**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ກ່ຽວກັບການດຳເນີນທຸລະກິດເຄື່ອງດື່ມ ທີ່ມີທາດເຫຼົ້ານັ້ນ ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ
## ໝວດທີ 1
## ການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 63 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກະຊວງອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກແຂວງ, ນະຄອນ;
3. ຫ້ອງການສາທາລະນະສຸກເມືອງ, ເທດສະບານ;
4. ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ.

ເພື່ອເຮັດໃຫ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດຳເນີນໄປຢ່າງມີປະສິດທິພາບນັ້ນ ໄດ້ສ້າງຕັ້ງຄະນະກຳມະການ ເພື່ອການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຊຶ່ງແມ່ນຄະນະດຽວກັນກັບຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄວບຄຸມຢາສູບ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອສະເໜີລັດຖະບານພິຈາລະນາ;

2. ຈັດຕັ້ງ, ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນແຜນການ, ແຜນງານ, ໂຄງການ ແລະ ລະບຽບການ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ສຸຂະສຶກສາກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຢ່າງກວ້າງຂວາງ;

4. ຊີ້ນໍາ, ຕິດຕາມ ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງການຄົ້ນຄວ້າ, ວິໄຈ;

5. ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ, ນໍາໃຊ້ພະນັກງານ, ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມພາລະບົດບາດຂອງຕົນ;

6. ຄົ້ນຄວ້າ, ປະກອບຄໍາເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງວິສາຫະກິດເຄື່ອງດື່ມທີ່ມີທາດເຫຼົ້າ ເຊັ່ນ ໂຮງງານຜະລິດ, ບໍລິສັດນໍາເຂົ້າ-ສົ່ງອອກ, ຈໍາໜ່າຍ, ບໍລິການ ເຄື່ອງດື່ມທີ່ມີທາດເຫຼົ້າ;

7. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ ແລະ ຄໍາແນະນໍາ ຂອງຂັ້ນລຸ່ມຂອງຕົນ ທີ່ຂັດກັບກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

8. ແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ອອກຄໍາສັ່ງໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການທີ່ໄດ້ກໍານົດໄວ້ ພ້ອມທັງເປັນເຈົ້າການໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

9. ຊີ້ນໍາການບໍາບັດ, ປິ່ນປົວ ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

10. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

11. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

12. ປະເມີນຜົນ, ສະຫຼຸບ ແລະ ລາຍງານວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ພະແນກສາທາລະນະສຸກແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມາເປັນວຽກງານລະອຽດ ຂອງຕົນ ເພື່ອຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ຂໍ້ມູນ ຂ່າວສານ, ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ກ່ຽວກັບ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມຄວາມຮັບຜິດຊອບຂອງຕົນ;

3. ຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າຂອງ ຫ້ອງການສາທາລະນະສຸກເມືອງ, ເທດສະບານ;

4. ຊີ້ນຳໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດ ເຫຼົ້າ ໃນການປະຕິບັດໜ້າທີ່ວຽກງານ;

5. ບຳບັດ, ປິ່ນປົວ ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

6. ພິຈາລະນາ, ແກ້ໄຂຄຳສະເໜີກ່ຽວກັບບັນຫາທີ່ກ່ຽວຂ້ອງກັບເຄື່ອງດື່ມທີ່ມີທາດເຫຼົ້າໃນ ຄວາມຮັບຜິດຊອບຂອງຕົນ ຫຼື ສະເໜີໃຫ້ອົງການຂັ້ນເທິງທີ່ກ່ຽວຂ້ອງແກ້ໄຂ;

7. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງວິສາຫະກິດເຄື່ອງດື່ມທີ່ມີ ທາດເຫຼົ້າ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເຊັ່ນ ໂຮງງານຜະລິດ, ບໍລິສັດນຳເຂົ້າ-ສົ່ງອອກ, ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດ ເຫຼົ້າ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມ ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມການມອບໝາຍ;

10. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ກະຊວງສາທາລະນະສຸກ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບ ການ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຫ້ອງການສາທາລະນະສຸກເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ເຜີຍແຜ່ຂໍ້ມູນ ຂ່າວສານ, ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ;

3. ຊີ້ນໍາ ໜ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫຼືອ ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

4. ພິຈາລະນາແກ້ໄຂຄໍາສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ສະເໜີ ໃຫ້ອົງການຂັ້ນເທິງແກ້ໄຂ;

5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກໍານົດສະຖານທີ່ບໍລິການ ແລະ ໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມກົດໝາຍ ແລະ ລະບຽບການ;

6. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 67 ສິດ ແລະ ໜ້າທີ່ຂອງຄະນະກໍາມະການຮັກສາສຸຂະພາບຂັ້ນບ້ານ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຄະນະກໍາມະການຮັກສາສຸຂະພາບຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ເຜີຍແຜ່ສຸຂະສຶກສາ, ຂໍ້ມູນ ຂ່າວສານ, ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ;

3. ເກັບກໍາສະຖິຕິ, ຕິດຕາມການຜະລິດແບບຄອບຄົວຂອງບ້ານ ຢ່າງທົ່ວເຖິງ;

4. ປະສານສົມທົບກັບໜ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫຼືອ ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

5. ພິຈາລະນາແກ້ໄຂຄໍາສະເໜີ, ໄກ່ເກ່ຍ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ສະເໜີໃຫ້ອົງການຂັ້ນເທິງແກ້ໄຂ;

6. ສະຫຼຸບ ແລະ ລາຍງານ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ຫ້ອງການສາທາລະນະສຸກເມືອງ, ເທດສະບານ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຂະແໜງການທີ່ໄດ້ກຳນົດໄວ້ໃນວັກທີ 1 ມາດຕາ 63 ຂອງກົດໝາຍສະບັບນີ້ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ຕາມພາລະບົດບາດຂອງຕົນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ລວມທັງສ້າງຂະບວນການປຸກລະດົມ ແລະ ປະກອບສ່ວນເຂົ້າໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

## ໝວດທີ 2
## ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 69 ອົງການກວດກາ**

ອົງການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 70 ເນື້ອໃນການກວດກາ**

ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ກວດກາການດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ການບັນຈຸ, ການຫຸ້ມຫໍ່, ການຕິດສະຫຼາກ, ຄຳເຕືອນ, ການໂຄສະນາ, ການນຳເຂົ້າ, ການສົ່ງອອກ, ການຈຳໜ່າຍ ລວມທັງສະຖານທີ່ດຳເນີນທຸລະກິດ ແລະ ສະຖານທີ່ບໍລິການ;

3. ກວດກາການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 71 ຮູບການການກວດກາ**

ການກວດກາ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ IX
## ງົບປະມານ ແລະ ວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 72 ງົບປະມານ**

ງົບປະມານຮັບໃຊ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ງົບປະມານແຫ່ງລັດ ແລະ ແຫຼ່ງອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 73 ວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ**

ສປປ ລາວ ຖືເອົາວັນທີ 19 ທັນວາ ຂອງທຸກປີ ເປັນວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການສ້າງຂະບວນການ, ກິດຈະກຳຕ່າງໆ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການສົ່ງເສີມສຸຂະພາບ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 74 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມຄວາມເໝາະສົມແລ້ວແຕ່ລະກໍລະນີ.

**ມາດຕາ 75 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າທີ່ບໍ່ຖືກຕ້ອງ ຫຼື ການລະເມີດຂໍ້ຫ້າມ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 76 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ມີລັກສະນະເບົາ ເປັນຕົ້ນ ການຂາຍເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ, ຊື້-ຂາຍ, ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 77 ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການກົດໜ່ວງ, ຖ່ວງດຶງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ຕົນໄດ້ຮັບມອບໝາຍ ຈະຖືກລົງວິໄນຕາມລະບຽບການ.

**ມາດຕາ 78 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ໃນກໍລະນີເບົາຊຶ່ງໄດ້ຜ່ານການສຶກສາອົບຮົມເປັນເທື່ອທີສອງ ຫຼື ໃນກໍລະນີມີຜົນເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການລະເມີດຂໍ້ຫ້າມ ຈະຖືກປັບໃໝ.

ອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 79 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 80 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 81 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 82 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້